ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ສືບຕໍ່ເຜີຍແຜ່ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ)



ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບ ກຸ່ມທະນາຄານໄທທີ່ດຳເນີນທຸລະກິດໃນ ສປປ ລາວ ໄດ້ຈັດຕັ້ງການເຜີຍແຜ່ກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ໃນວັນທີ 26 ສິງຫາ 2020 ທີ່ໂຮງແຮມຄາວ ພຣາຊາ, ນະຄອນຫຼວງວຽງຈັນ ໂດຍການກ່າວເປີດພິທີຂອງ ທ່ານ ປ.ອ. ເວີນສະຫວັນ ສີວິໄຊ ຮອງຫົວໜ້າກົມນິຕິກຳ, ທະນາຄານແຫ່ງ ສປປ ລາວ ແລະ ມີບັນດາຄະນະນຳ ແລະ ພະນັກງານຂອງກຸ່ມສາຂາທະນາຄານໄທ ເຂົ້າຮ່ວມ.

ການຈັດຕັ້ງເຜີຍແຜ່ກົດໝາຍໃນເທື່ອນີ້ ແນໃສ່ເຮັດໃຫ້ກຸ່ມສາຂາທະນາຄານໄທ ມີຄວາມເຂົ້າໃຈກົດໝາຍສະບັບດັ່ງກ່າວຢ່າງຈະແຈ້ງ ທັງນີ້ກໍ່ເພື່ອຫຼີກລ້ຽງການຕີຄວາມໝາຍຂອງກົດໝາຍໄປໃນທາງທີ່ບໍ່ສອດຄ່ອງກັບຄວາມເປັນຈິງ ຕໍ່ການດຳເນີນທຸລະກິດ ໃນ ສປປ ລາວ ເພື່ອຄວາມສະດວກໃນການໃຫ້ບໍລິການແກ່ລູກຄ້າຂອງທະນາຄານ; ພ້ອມນັ້ນ, ກໍ່ເພື່ອຮັບປະກັນຄວາມໝັ້ນຄົງໃນການດຳເນີນທຸລະກິດ.





ກົດໝາຍສະບັບດັ່ງກ່າວນີ້ ໄດ້ມີການປັບປຸງບາງມາດຕາ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບເສດຖະກິດໃນປະຈຸບັນ ເປັນຕົ້ນການເພີ່ມທຶນຈົດທະບຽນຂອງທະນາຄານທຸລະກິດ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ການຂໍອະນຸຍາດສ້າງຕັ້ງທະນາຄານ ໃນກົດໝາຍສະບັບໃໝ່ນີ້ ຈາກ 300 ຕື້ກີບເພີ່ມເປັນ ຢ່າງໜ້ອຍ 500 ຕື້ກີບ; ນອກນັ້ນ, ຍັງໄດ້ກຳນົດຂອບການສຳຮອງທຶນເພື່ອປ້ອງກັນຄວາມສ່ຽງທີ່ອາດເກີດຂຶ້ນໃນການບໍລິຫານຂອງທະນາຄານທຸລະກິດເອງ ເພື່ອຮັບປະກັນສິດຜົນປະໂຫຍດຂອງລູກຄ້າທີ່ມີບັນຊີເງິນຝາກ ແລະ ບັນດາເງື່ອນໄຂອື່ນໆ ທີ່ສຳຄັນໃນກົດໝາຍ.

ການເຜີຍແຜ່ກົດໝາຍແມ່ນ ໄດ້ດຳເນີນມາຢ່າງຕໍ່ເນື່ອງ ນັບແຕ່ກົດໝາຍດັ່ງກ່າວໄດ້ ຖືກຮັບຮອງຈາກສະພາແຫ່ງຊາດ ນັບແຕ່ປີ 2018 ໃນນັ້ນໄດ້ເຜີຍແຜ່ໃຫ້ບັນດາກົມພາຍໃນ ທຫລ ແລະ ສາຂາ ທຫລ ສຳລັບຜູ້ຄຸ້ມຄອງ, ບັນດາທະນາຄານທຸລະກິດລັດ, ທະນາຄານເອກະຊົນ ແລະ ພາກສ່ວນອົງການລັດທີ່ຕິດພັນກັບຂະແໜງການທະນາຄານ ແລະ ໃນຕໍ່ໜ້າຍັງຈະສືບຕໍ່ການເຜີຍແຜ່ໃນລວງເລິກກັບບັນດາທະນາຄານທຸລະກິດຜູ້ຈັດຕັ້ງປະຕິບັດກົດໝາຍຕົວຈິງ.

# **ພາບ-ຂ່າວ: ສົມອົກ ເຄນຄຳແພງ**

# ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ